# ວັກຊິນ ໝາກສຸກສັດປີກ

## ນິຍາມ:

ວັກຊິນຊະນິດນີ້ ປຸງແຕ່ງຈາກເຊື້ອໄວຣັດໝາກສຸກສັດປີກ ປູກໃສ່ໄຂ່ລູກອາຍຸ 12 ມື້ ຫຼັງຈາກນັ້ນ ເກັບເອົານ້ຳຫຼໍ່ລ້ຽງ ແລະ ເຫື່ອຫຸ້ມພົກນ້ຳຫຼໍ່ລ້ຽງ ມາປຸງແຕ່ງເປັນວັກຊິນ. ບັນຈຸແກ້ວ ແລ້ວເອົາເຂົ້າຈັກດູດແຫ້ງດ້ວຍ ຄວາມເຢັນໃນລະບົບສູນອາກາດ. ເປັນວັກຊິນເຊື້ອເປັນຊະນິດຝຸ່ນ.




## ລັກສະນະອາການ

ຕຸ່ມໝາກສຸກຈະເກີດຂຶ້ນຕາມໜົງ, ຫງອນ, ຕ້າງ, ຂອບຕາ ຮີມສົບ, ເລີ່ມຈາກຕຸ່ມນ້ອຍໆ ຄ່ອຍໃຫຍ່ຂຶ້ນເປັນສີແດງຊ້ຳ ຕໍ່ມາສຸກແລ້ວຕົກເກັດ. ບາງຄັ້ງພະຍາດນີ້ເກີດຂຶ້ນ ທາງລະບົບຫຼອດລົມ ເຮັດໃຫ້ໄກ່ຫາຍໃຈຍາກ ແລະ ໄກ່ນ້ອຍຕາຍຫຼາຍ.

## ຂໍ້ແນະນຳ

ໃຊ້ປ້ອງກັນພະຍາດໝາກສຸກສັດປີກທົ່ວໄປ ທີ່ມີອາຍຸ 6 ອາທິດຂຶ້ນໄປ (ສະເພາະໄກ່ ລາດ ແມ່ນ 10 ມື້ຂຶ້ນໄປ ).

## ວິທີໃຊ້

ແກ້ວ 100 ເຂັມ ປະສົມນ້ຳກັ່ນ ຫຼື ກຼີຊີຣິນ ນ້ຳເກືອ 10 ມລ.



## ວິທີສັກ

ເອົາເຂັມດູດເອົານ້ຳຢາ ທີ່ປະສົມແລ້ວນັ້ນ, ຢອດລົງບ່ອນໜັງບາງໆຂອງປີກ (ພົນປີກ) ແລ້ວໃຊ້ເຂັມແທງລົງ 2—3ເທື່ອ. ຫຼັງຈາກສັກຢາ 5—6 ມື້ ຈະເຫັນຕຸ່ມໝາກສຸກເກີດຂຶ້ນຕາມບ່ອນທີ່ ສັກນັ້ນ ຖ້າບໍ່ເຫັນລັກສະນະ ຂອງຕຸ່ມໝາກສຸກນີ້ ເກີດຂຶ້ນແລ້ວ ຕ້ອງສັກຄືນໃໝ່ອີກຫຼັງຈາກປະສົມນ້ຳຢາແລ້ວ ຕ້ອງໃຊ້ໃຫ້ໝົດພາຍໃນໄລຍະ 2 ຊົ່ວໂມງ.

—ບໍ່ຄວນໃຊ້ເຫຼົ້າ ຫຼື ຢາຂ້າເຊື້ອອື່ນໆ ເຊັດຕາມບໍລິເວນສັກຢາ, ກ່ອນຫຼື ຫຼັງສັກ.



ໃຊ້ເຂັມແທງລົງພົ້ນປີກ 2—3 ຄັ້ງ

## ໄລຍະຄຸ້ມກັນ

ສັດຈະມີຄວາມຄຸ້ມກັນ ຫຼັງຈາກສັກຢາໄດ້ 2 ອາທິດ ແລະ ຄຸ້ມກັນພະຍາດໝາກສຸກຢ່າງໜ້ອຍ 1 ປີ.

## ການເກັບຮັກສາ

ຮັກສາໃນອຸນນະພູມ 4 ອົງສາກຸ້ມໄດ້ 3 ເດືອນ. ໃນອຸນນະພູມ —3 ອົງສາກຸ້ມໄດ້ 2 ປີ.

ເວລາຂົນຍ້າຍວັກຊິນຄວນຮັກສາໄວ້ໃຫ້ຢູ່ໃນຄວາມເຢັນ ແລະ ບໍ່ໃຫ້ຖືກແສງແດດ.

## ແກ້ວບັນຈຸ:

ແກ້ວໜຶ່ງບັນຈຸ 100 ເຂັມ

## ຕາຕະລາງ : ການນຳໃຊ້ຢາວັກຊີນ

| ຊະນິດຢາວັກຊີນ | ອາຍຸສັດຕ້ອງໃຊ້ | ວິທີໃຊ້ | ໄລຍະຄຸ້ມກັນ |
|---|---|---|---|
| • ຢາວັກຊີນ ໝາກສຸກສັດປີກ | • ໃຊ້ກັບສັດປີກທົ່ວໄປທີ່ມີອາຍຸ 6 ອາທິດຂຶ້ນໄປ (ສະເພາໄກ່ລາດແມ່ນ 10 ມື້ຂຶ້ນໄປ). | • ແກ້ວ100 ເຂັມປະສົມນ້ຳ 10 ເຊເຊ<br>• ແທງພື້ນປີກບາງ 2—3 ເທື່ອ. | 1 ປີ |


**Laos Extension for Agriculture Project**
**P.O. Box 9159**
**Vientiane, Lao P.D.R.**



ກອງສົ່ງເສີມກະສິກຳ ແລະ ປ່າໄມ້ ແຫ່ງຊາດ
ພະແນກສົ່ງເສີມ ແລະ ຄຸ້ມຄອງໂຄງການ


# ການນຳໃຊ້ຢາ
# ວັກຊີນໝາກສຸກສັດປີກ





ຄັດຈາກ: ປຶ້ມຄູ່ມືການນຳໃຊ້ວັກຊີນສຳລັບສັດ (1997)

ຮຽບຮຽງໂດຍ :

ໜ່ວຍງານຝຶກອົບຮົມສົ່ງເສີມ ຂັ້ນສູນກາງ (CETDU)

ສະໜັບສະໜູນໂດຍ :

ໂຄງການ ສົ່ງເສີມ ກະສິກຳ (LEAP)